ຫ້ອງການ EDD ຊື່
ຕູ້ໄປສະນີ
ເມືອງ, CA ລະຫັດໄປສະນີ

Employment Development Department
State of California

**ເບີໂທລະສັບຂອງຫ້ອງການ EDD:**

| | |
|---|---|
| ພາສາອັງກິດ: | 1-800-300-5616 |
| ພາສາສະເປນ: | 1-800-326-8937 |
| ພາສາກວາງຕຸ້ງ: | 1-800-547-3506 |
| ພາສາຈີນກາງ: | 1-866-303-0706 |
| ພາສາຫວຽດ: | 1-800-547-2058 |
| TTY: | 1-800-815-9387 |

ຊື່ຜູ້ຍື່ນຄໍາຮ້ອງ
ທີ່ຢູ່ຂອງຜູ້ຍື່ນຄໍາຮ້ອງ
ເມືອງທີ່ຜູ້ຍື່ນຄໍາຮ້ອງອາໄສຢູ່, ລັດ,
ລະຫັດໄປສະນີ

ວັນທີສົ່ງໄປສະນີ:
ສໍາລັບຫ້ອງການໃຊ້ເທົ່ານັ້ນ:

# ໜັງສືແຈ້ງການສໍາພາດເພື່ອກໍານົດສິດໃນການໄດ້ຮັບຄວາມຊ່ວຍເຫຼືອດ້ານການປະກັນການຫວ່າງງານ

---

## ຍ້ອນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບໜັງສືແຈ້ງການນີ້?

ປະເດັນບັນຫາທີ່ອາດຈະເປັນໄປໄດ້ກ່ຽວກັບການມີສິດໃນການໄດ້ຮັບຄວາມຊ່ວຍເຫຼືອທີ່ອະທິບາຍໃນໜ້າຕໍ່ໄປໄດ້ຖືກລະບຸໄວ້ໃນການຮຽກຮ້ອງສິດປະໂຫຍດກ່ຽວກັບການປະກັນການຫວ່າງງານ (Unemployment Insurance ຫຼື UI) ຂອງທ່ານແລ້ວ.
ທ່ານມີນັດໝາຍໃນການສໍາພາດທາງໂທລະສັບເພື່ອໃຫ້ຂໍ້ມູນກັບຕົວແທນຂອງຫ້ອງການ EDD.
ທາງພະແນກຈະໃຊ້ຂໍ້ມູນທີ່ທ່ານໃຫ້ໄວ້ເພື່ອກໍານົດວ່າທ່ານຈະໄດ້ຮັບເງິນ ຊ່ວຍເຫຼືອດ້ານການປະກັນການຫວ່າງງານບໍ່.
**ຖ້າທ່ານບໍ່ຫວ່າງທີ່ຈະເຂົ້າຮ່ວມການສໍາພາດທາງໂທລະສັບ ຈະມີການຕັດສິນໃຈໂດຍອີງໃສ່ຂໍ້ມູນທີ່ມີຢູ່ ເຊິ່ງອາດຈະເຮັດໃຫ້ມີການປະຕິເສດການຈ່າຍເງິນ ຊ່ວຍເຫຼືອໃຫ້ແກ່ທ່ານກໍ່ໄດ້.**

____________________ **ລະຫວ່າງເວລາ** ________ **ເຖິງ** ________ **ເວລາປາຊີຟິກ**

ຕົວແທນຂອງຫ້ອງການ EDD ຈະໂທຫາທ່ານທີ່ເບີໂທຕໍ່ໄປນີ້. ມີບໍລິການແປພາສາໃຫ້ໂດຍບໍ່ເສຍຄ່າ.

______________

## ຂ້າພະເຈົ້າຄວນຈະຄາດຫວັງຫຍັງໃນລະຫວ່າງການສໍາພາດ?

ທ່ານຈະຖືກຕັ້ງຄໍາຖາມກ່ຽວກັບການຮຽກຮ້ອງສິດປະໂຫຍດຂອງທ່ານ. ຕົວຢ່າງຄໍາຖາມປາກົດຢູ່ດ້ານຫຼັງຂອງໜັງສືແຈ້ງການນີ້.
ກະລຸນາກຽມພ້ອມທີ່ຈະຕອບຄໍາຖາມເຫຼົ່ານີ້ໃນລະຫວ່າງການສໍາພາດ. ທ່ານມີສິດທີ່ຈະຮ້ອງຂໍໃຫ້ມີເວລາເພີ່ມເຕີມໃນການກະກຽມ, ສົ່ງຫຼັກຖານ, ສະເໜີພະຍານ ແລະ ມີບຸກຄົນໃດໜຶ່ງເປັນຕົວແທນໂດຍທ່ານເສຍຄ່າໃຊ້ຈ່າຍເອງ. ຖ້າທ່ານຕ້ອງການເວລາເພີ່ມເຕີມ
ທ່ານຕ້ອງຂໍນັດໝາຍໃໝ່ກ່ອນທີ່ຈະຮອດກໍານົດວັນແລະເວລານັດໝາຍທີ່ລະບຸໄວ້ໃນແບບຟອມນີ້.
ການຂໍນັດໝາຍເພື່ອສໍາພາດໃໝ່ອາດຈະເຮັດໃຫ້ການຈ່າຍເງິນ ຊ່ວຍເຫຼືອຂອງທ່ານຊັກຊ້າ ເນື່ອງຈາກກໍານົດນັດໝາຍທີ່ທ່ານມີແມ່ນ ໄວທີ່ສຸດຢູ່ແລ້ວ.

ພວກເຮົາອາດຈະຕິດຕໍ່ອະດີດນາຍຈ້າງຂອງທ່ານ ຫຼື ພະຍານອື່ນໆເພື່ອກວດສອບຄໍາຖະແຫຼງຂອງທ່ານ ຫຼື ເພື່ອຂໍຂໍ້ມູນ. ທ່ານສາມາດໂຕ້ແຍ້ງຄໍາຖະແຫຼງ ຫຼື ຫຼັກຖານໃດໆທີ່ເຂົາເຈົ້າໃຫ້ໄວ້ກໍ່ໄດ້.

## ການສໍາພາດເພື່ອກໍານົດສິດໃນການໄດ້ຮັບຄວາມຊ່ວຍເຫຼືອນີ້ມີຜົນກະທົບແນວໃດຕໍ່ການຈ່າຍເງິນຊ່ວຍເຫຼືອຂອງຂ້າພະເຈົ້າ?

ຖ້າທ່ານບໍ່ເຄີຍໄດ້ຮັບເງິນຊ່ວຍເຫຼືອຈາກການຮຽກຮ້ອງສິດ ແລະມີປະເດັນບັນຫາທີ່ອາດຈະເປັນໄປໄດ້ກ່ຽວກັບການມີສິດໃນການໄດ້ຮັບຄວາມຊ່ວຍເຫຼືອ ຈະບໍ່ສາມາດຈ່າຍເງິນຊ່ວຍເຫຼືອເພີ່ມເຕີມໄດ້ ຈົນກວ່າຂັ້ນຕອນການສໍາພາດຈະສໍາເລັດ ແລະມີການກໍານົດສິດໃນການໄດ້ຮັບຄວາມຊ່ວຍເຫຼືອຂອງທ່ານ.
ສືບຕໍ່ການຢັ້ງຢືນເພື່ອຂໍຮັບສິດປະໂຫຍດ ແລະນໍາສົ່ງໃບຢັ້ງຢືນທຸກສອງອາທິດທາງອອນລາຍ, ທາງໂທລະສັບ ຫຼື ທາງໄປສະນີໃນຂະນະທີ່ກໍາລັງມີການແກ້ໄຂບັນຫານີ້.

ຖ້າທ່ານໄດ້ຮັບເງິນຊ່ວຍເຫຼືອຈາກການຮຽກຮ້ອງສິດ ແຕ່ເງິນຊ່ວຍເຫຼືອ ເພີ່ມເຕີມຍັງຄ້າງຄາຢູ່ເປັນເວລາຫຼາຍກວ່າສອງອາທິດ ເນື່ອງຈາກມີບັນຫາກ່ຽວກັບການມີສິດໃນການໄດ້ຮັບຄວາມຊ່ວຍເຫຼືອ ພວກເຮົາຈະດໍາເນີນການຈ່າຍເງິນໃຫ້ທ່ານແບບມີເງື່ອນໄຂ.
ຖ້າທ່ານສືບຕໍ່ການຢັ້ງຢືນຂໍຮັບສິດປະໂຫຍດໃນຂະນະທີ່ພວກເຮົາກໍາລັງກໍານົດສິດຂອງທ່ານໃນການໄດ້ຮັບຄວາມຊ່ວຍເຫຼືອ ການຈ່າຍເງິນໃດໆ ແບບມີເງື່ອນໄຂຈະຖືວ່າເປັນການຈ່າຍເງິນເກີນ ຖ້າໃນພາຍຫຼັງພວກເຮົາພົບວ່າທ່ານບໍ່ມີສິດໃນການໄດ້ຮັບຄວາມຊ່ວຍເຫຼືອເທົ່ານັ້ນ.

ເພື່ອທີ່ຈະຂໍນັດໝາຍໃໝ່, ອັບເດດເບີໂທລະສັບຂອງທ່ານ ຫຼື ຢັ້ງຢືນສິດປະໂຫຍດຂອງທ່ານ ກະລຸນາໃຊ້ UI Online[SM] ທີ່ **edd.ca.gov/UI_Online** ຫຼື ໂທໄປທີ່ເບີໂທຟຣີໃດໜຶ່ງທີ່ລະບຸໄວ້ຂ້າງເທິງນີ້.

ສໍາລັບຂໍ້ມູນກ່ຽວກັບວິທີທີ່ຫ້ອງການ EDD ນໍາໃຊ້ກົດໝາຍແລະນະໂຍບາຍເພື່ອກໍານົດສິດໃນການ ໄດ້ຮັບຄວາມຊ່ວຍເຫຼືອ ກະລຸນາເບິ່ງຄູ່ມືການກໍານົດສິດປະໂຫຍດດ້ານການປະກັນການຫວ່າງງານ (UI Benefit Determination Guide) ໄດ້ທີ່ **edd.ca.gov/UIBDG**.

## ຄຳແນະນຳໃນການສຳພາດທາງໂທລະສັບ

ໃນລະຫວ່າງການສຳພາດທາງໂທລະສັບ ທ່ານອາດຈະຖືກຖາມຄຳຖາມຕໍ່ໄປນີ້.

**ໝາຍເຫດ**: ຄຳຖາມຈະຂຶ້ນຢູ່ກັບເຫດຜົນທີ່ທ່ານມີນັດໝາຍໃນການສຳພາດທາງໂທລະສັບ.